# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 18 ມິຖຸນາ 2006 (6-18-006)

---

## ຟີລິບ: ຄວາມເຊື່ອທີ່ນຳໄປເປັນພະຍານ

**ຂໍ້ພຣະຄັມພີໃນບົດຮຽນ:** ກິຈການ 8:26-40

**ພຣະຄັມພີແຫ່ງຄວາມຈິງ:** ໄວ້ວາງໃຈໃນພຣະເຈົ້າໃຫ້ພຣະອົງນຳພາແລະໃຫ້ພຣະອົງປະທານພະລັງໃຫ້ແກ່ພວກເຂົາ ຜູ້ທີ່ເຊື່ອຈຶ່ງສາມາດມີສະມັດພາບໃນການເປັນພຍານກັບຄົນອື່ນ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ອອກແບບເພື່ອຊ່ອຍເສີມສ້າງຄວາມເຊື່ອຂອງທ່ານໃຫ້ແຂງແກ່ນແລະຄົງທົນຕລອດໄປ:

- ♦ ໃຫ້ເຂົ້າໃຈເຖິງການດຳເນີນຊີວິດທີ່ມີຄວາມເຊື່ອຈະຕ້ອງຮ່ວມທັງການເປັນພຍານບອກຄົນອື່ນກ່ຽວກັບເຣື່ອງລາວຂອງພຣະເຢຊູ; ແລະ
- ♦ ຕັດສິນໃຈເພື່ອຕັ້ງໝັ້ນຄົງຢູ່ໃນການພັ່ງພ້ອມທີ່ຈະກ່າວເຣື່ອງລາວຂອງພຣະເຢຊູຢູ່ໃນທຸກສະພາບການ.

### ຂ້າພະເຈົ້າຄວນຈະເລີ້ມບາດກ້າວອັນໃດທີ່ຈະໄປບອກຄົນອື່ນກ່ຽວກັບເຣື່ອງລາວຂອງພຣະເຢຊູ?

ທ່ານອີໂກມາຈາກພາກຕາເວັນອອກຂອງທະວີບເອີຣົບ. ໃນການປະຊຸມບໍ່ນານມານີ້ ລາວໄດ້ສະແດງອອກເຖິງຄວາມຂອບໃຈມາຍັງພວກຜູ້ປະກາດຂ່າວປະເສີດທີ່ໄດ້ໄປປະເທດຂອງລາວ ແລ້ວໄປເວົ້າເຣື່ອງລາວຂອງພຣະເຢຊູໃຫ້ລາວຟັງ. ຕໍ່ມາ ລາວໄດ້ມາເປັນຜູ້ທີ່ມີຄວາມເຊື່ອ ແລະໄດ້ມາສະຫະຣັຖອະເມຣິກາ. ຕັ້ງແຕ່ລາວມາຮອດປະເທດຂອງພວກເຮົາ ລາວໄດ້ນຳຄົນອະເມຣິກາ 200 ຄົນມາເຊື່ອພຣະເຈົ້າແລ້ວ.

ຄວາມເຊື່ອຂອງທ່ານອີໂກ ເໝືອນກັບຄວາມເຊື່ອຂອງຟີລິບໃນບົດຮຽນຂອງມື້ນີ້ ຊຶ່ງເປັນຄວາມເຊື່ອທີ່ມີຄຳພຍານ. ຄວາມເຊື່ອປະເພດນີ້ຈະບອກເຣື່ອງລາວຂອງພຣະເຢຊູໃຫ້ທຸກໆຄົນຟັງ ທຸກໆບ່ອນ ແລະທຸກໆເວລາ. ຄົນຂອງພຣະເຈົ້າທີ່ມີຄວາມເຊື່ອ ຈະຕ້ອງຕຽມພ້ອມທີ່ຈະບອກຂ່າວປະເສີດຂອງອົງພຣະເຢຊູໃຫ້ຄົນອື່ນຟັງຢູ່ໃນທຸກສະພາບການ. ບົດຮຽນນີ້ຈະຊ່ອຍພວກເຮົາໃຫ້ເຂົ້າໃຈວ່າ ໄວ້ວາງໃຈໃນພຣະເຈົ້າໃຫ້ພຣະອົງນຳພາແລະໃຫ້ພຣະອົງປະທານພະລັງໃຫ້ແກ່ພວກເຮົາ ພວກເຮົາຈຶ່ງສາມາດມີສະມັດພາບໃນການເປັນພຍານກັບຄົນອື່ນ.

### ສຶກສາພຣະຄັມພີ

**1. ຕິດຕາມພຣະວິນຍານ** (ກິຈການ 8:26-29)

ຟີລິບເປັນຜູ້ຮັບໃຊ້. ທາງໂບດເຢຣູຊາເລັມເຫັນວ່າລາວ "ມີຊື່ສຽງດີ ຜູ້ເຕັມໄປດ້ວຍພຣະວິນຍານບໍຣິສຸດ ແລະສະຕິປັນຍາ" ພວກສາສນາຈານເຫັນພ້ອມກັນວ່າ ລາວເປັນຜູ້ທຳອິດທີ່ຖືກເລືອກມາເປັນມັຄນາຍົກທີ່ຮັບໃຊ້ແຈກຢາຍອາຫານ (ກິຈການ 6:1-5).

ຟີລິບໄດ້ຮັບໃຊ້ຄົນອື່ນດ້ວຍສິ່ງຂອງທີ່ລາວມີ. ລາວມີໃຈກວ້າງຂວາງ ລາວໃຫ້ໂປໂລພັກເຊົາຢູ່ເຮືອນຂອງລາວໃນຂນະທີ່ໂປໂລໄປເມືອງກາຍຊາເຣັຽ (21:8). ຫລັງຈາກໄດ້ໜີຈາກກຸງເຢຣູຊາເລັມ ຍ້ອນວ່າມີການຂົ່ມເຫງອັນໃຫຍ່ຕໍ່

ຄຣິສຕຽນ ຟີລິບໄດ້ໄປແຂວງຊາມາເຣັຽແລະຮັບໃຊ້ຄົນອື່ນດ້ວຍການປະກາດຂ່າວປະເສີດ. ພຣະເຈົ້າຊົງອວຍພອນລາວໃນການປະກາດຂ່າວປະເສີດ. ປະຊາຊົນໄດ້ຮັບຟັງລາວດ້ວຍຄວາມຈັ້ງໃຈ. ພວກເຂົາໄດ້ເຫັນການອິດທິຣິດອັນໃຫຍ່ເກີດຂຶ້ນຢູ່ໃນທີ່ນັ້ນ (ກິຈການ 8:6-8).

ພຣະເຈົ້າໄດ້ກະທຳສິ່ງອັນໃຫຍ່ຫລວງໂດຍຜ່ານທາງຟີລິບ ເພາະວ່າລາວມີຄວາມຮູ້ສຶກວ່ອງໄວຕໍ່ສຽງຂອງພຣະວິນຍານແລະຕິດຕາມຄຳສັ່ງຂອງພຣະອົງ. **ເທວະດາຕົນນຶ່ງຂອງອົງພຣະຜູ້ເປັນເຈົ້າໄດ້ສັ່ງຟີລິບວ່າ, "ຈົ່ງລຸກຂຶ້ນໄປທາງທິດໃຕ້ ຕາມທາງລົງຈາກກຸງເຢຣູຊາເລັມໄປເຖິງເມືອງຄາຊາ."** ເມືອງຄາຊາຕັ້ງຢູ່ທາງພາກຕາເວັນຕົກສ່ຽງໃຕ້ຂອງຢູດາ ຕໍ່ຈາກນັ້ນກໍເປັນແຜ່ນດິນແຫ້ງແລ້ງຈົນໄປຮອດປະເທດເອຢິບ.

ໃນສາຍຕາຂອງມະນຸດແລ້ວ ຟີລິບບໍ່ຄວນຈະໜີປະແຂວງຊາມາເຣັຽເລີຍ ເນື່ອງຈາກວ່າໃນຂະນະນັ້ນມີຄົນຮັບເຊື່ອຫລາຍ ມີງານຟື້ນຟູທີ່ຕື່ນເຕັ້ນທຸກສິ່ງທຸກຢ່າງກໍໄປໄດ້ດີ. ໃນຂະນະນັ້ນ ລາວຈະເຂົ້າໃຈເຖິງເຫດຜົນຂອງພຣະເຈົ້າຫລືບໍ່ທີ່ໃຫ້ລາວປ່ຽນທິດທາງຂອງການປະກາດພວກເຮົາກໍບໍ່ຮູ້ ແຕ່ມີສິ່ງນຶ່ງຄືວ່າ **ທ່ານຈົ່ງລຸກຂຶ້ນເດີນທາງໄປ.** ລາວໄດ້ຕິດຕາມແນວທາງຂອງພຣະເຈົ້າໂດຍບໍ່ຮູ້ລາຍລະອຽດອັນໃດເລີຍ. ລາວບໍ່ເຫມືອນກັບຄົນອື່ນໆໃນສມັຍນີ້ ລາວບໍ່ໄດ້ຄິດໄລ່ເບິ່ງກ່ອນວ່າ ການໄປຄັ້ງນີ້ຈະມີຄວາມສະດວກສະບາຍບໍ່ ຫລືມີເຫດຜົນພຽງພໍບໍ່? ພວກເຮົາຈະຕ້ອງເຊື່ອຟັງພຣະເຈົ້າບໍ່ວ່າສະພາບການຈະເປັນຢ່າງໃດ. ສຳລັບພວກເຮົາຜູ້ທີ່ເຊື່ອ ການກະທຳອັນໃດກໍຕາມບໍ່ແມ່ນເຮັດເພື່ອຕົວເຮົາເອງ. ເປົ້າຫມາຍຂອງຊີວິດພວກເຮົາແມ່ນເຮັດເພື່ອພຣະເຈົ້າ.

ໃນຂະນະທີ່ເດີນທາງໄປເມືອງຄາສາ **ເບິ່ງແມ ມີຂ້າຣາຊການຊັ້ນສູງຂອງກັນດາເກດ** ເປັນຕຳແໜ່ງທີ່ໄດ້ຮັບຈາກ **ພຣະຣາຊີນີຂອງຊາວໄທອີທີໂອເປັຽ** ແລະ **ເປັນນາຍຄັງທັງຫມົດຂອງພຣະຣາຊີນີ. ໃນຂະນະທີ່ນັ່ງຣົດກຳລັງກັບເມືອ** ຈາກ **ການນະມັສການ** ຢູ່ **ກຸງເຢຣູຊາເລັມ ທ່ານໄດ້ອ່ານໜັງສືຂອງເອຊາຢາຜູ້ປະກາດພຣະທັມຢູ່.** ບໍ່ຕ່າງຫຍັງເລີຍກັບຫລາຍໆຄົນທີ່ຖືສາສນາໃນສມັຍນີ້ ລາວບໍ່ມີຄວາມສັມພັນອັນໃດເລີຍກັບອົງພຣະເຢຊູ. ລາວກຳລັງອ່ານພຣະທັມຂອງພຣະເຈົ້າເພື່ອສແວງຫາຄວາມຈິງ.

ເມື່ອຟີລິບເຫັນ **ຊາວໄທອີທີໂອເປັຽ** ລາວເຊື່ອຟັງຄຳຂອງ **ພຣະວິນຍານ** ທີ່ໄດ້ກ່າວຕໍ່ລາວວ່າ **"ຈົ່ງເຂົ້າຕິດກັບຣົດນີ້."** ການຈຳກັດຄຳວ່າຄົນຂອງພຣະເຈົ້າທີ່ມີຄວາມເຊື່ອເປັນຄົນທີ່ມີຄວາມຮູ້ສຶກໄດ້ວ່ອງໄວຕໍ່ສຽງຂອງພຣະວິນຍານແລະປະຕິບັດຕາມ.

- ♦ ໃຫ້ທ່ານວັດແທກທ່ານເອງເບິ່ງວ່າ ເລີ້ມຈາກ 1 ຫາ 5 ທ່ານໄດ້ຕິດຕາມພຣະວິນຍານເຖິງຂັ້ນໃດ?
- ♦ ທ່ານມີບາດກ້າວອັນໃດທີ່ຈາກແບ່ງປັນສິ່ງຂອງທີ່ທ່ານມີໃຫ້ກັບຄົນອື່ນ?
- ♦ ເປັນຫຍັງບາງຄັ້ງພຣະເຈົ້າໃຫ້ພວກເຮົາເຮັດໃນສິ່ງທີ່ພວກເຮົາຄິດວ່າບໍ່ມີເຫດຜົນຫຍັງເລີຍ?
- ♦ ທ່ານຈຳກັດຄຳວ່າເປົ້າຫມາຍຊີວິດຂອງທ່ານເປັນຢ່າງໃດ?
- ♦ ມີຫຍັງທີ່ສະແດງອອກໃຫ້ເຫັນວ່າທ່ານເປັນຜູ້ທີ່ມີຄວາມຮູ້ສຶກໄດ້ວ່ອງໄວຕໍ່ສຽງຂອງພຣະວິນຍານ?
- ♦ ທ່ານຄິດວ່າຈະມີຫຍັງເກີດຂຶ້ນຖ້າຟີລິບບໍ່ເຊື່ອຟັງພຣະວິນຍານ?
- ♦ ທ່ານໄດ້ຍິນສຽງຂອງພຣະວິນຍານຂອງພຣະເຈົ້າເວົ້າຕໍ່ທ່ານອັນໃດແດ່? ທ່ານຈະເຊື່ອຟັງຫລືບໍ່?

## ຂ. <u>ບອກຄົນອື່ນກ່ຽວກັບເຣື່ອງລາວຂອງພຣະເຢຊູ</u> (ກິຈການ 8:30-35)

ຟີລິບເຂົ້າໄປໃກ້ຣົດຂອງຊາວໄທອີທີໂອເປັນ ແລະໄດ້ຍິນທ່ານຣາຊການຄົນນັ້ນອ່ານພຣະທັມເອຊາຢາບົດທີ 53 ສຽງດັງໆ. ລາວຈະປະໃຫ້ຣົດນັ້ນກາຍໄປເລີຍແລະບໍ່ເວົ້າຫຍັງກໍໄດ້. ມີຫລາຍຄົນໃນປະຈຸບັນນີ້ຄົງຈະເຮັດຢ່າງນັ້ນ.

ມີຫລາຍຄົນໃຫ້ເຫດຜົນໄປຫລາຍຢ່າງທີ່ບໍ່ຢາກເປັນພຍານໃຫ້ກັບຄົນອື່ນ. ບາງຄົນກໍເວົ້າວ່າ ເມື່ອເປັນພຍານໄປແລ້ວບໍ່ຮູ້ວ່າພວກເຂົາຈະສະແດງອາການຢ່າງໃດໂຕ້ຕອບ. ບາງຄົນກໍມີຄວາມຮູ້ສຶກວ່າ ຕົນເອງບໍ່ທັນໄດ້ຮັບການຝຶກຊ້ອມໃນການເປັນພຍານພຽງພໍເທື່ອ. ບາງຄົນກໍຍັງບໍ່ທັນມີຄວາມໝັ້ນໃຈໃນຄວາມລອດພົ້ນທີ່ຕົນໄດ້ຮັບເທື່ອ ຄົນນັ້ນກໍເລີຍບໍ່ສາມາດຊ່ອຍຄົນອື່ນໄດ້.

ໜ້າເວດທະນາແທ້ໆ ມີຫລາຍຄົນເຊື່ອວ່າການເປັນພຍານນັ້ນ ແມ່ນຂອງພຣະຣາຊທານໃຫ້ກັບບາງຄົນເທົ່ານັ້ນ ພວກເຂົາບໍ່ໄດ້ສຳນຶກເລີຍວ່າ ພຣະບັນຊາໃຫ້ເປັນພຍານໃຫ້ກັບພຣະອົງນັ້ນແມ່ນໜ້າທີ່ຮັບຜິດຊອບຂອງທຸກຄົນທີ່ໄດ້ຮັບເຊື່ອແລະຕິດຕາມອົງພຣະເຢຊູຄຣິດ (ມັດທາຍ 28:19-20). ເມື່ອເວລາພວກເຮົາສຳນຶກໄດ້ແລ້ວ ພຣະວິນຍານຈະປະທານຄຳເວົ້າໃຫ້ພວກເຮົາທີ່ຈະເວົ້າ ພວກເຮົາຈຶ່ງມີຄວາມສາມາດເປັນພຍານໄດ້ຢ່າງບໍ່ມີຄວາມຢ້ານອັນໃດທັງສິ້ນ.

ໃນຂນະຊາວເອທີໂອເປັຽກຳລັງອ່ານພຣະຄັມພີຢູ່ນັ້ນ ຟີລິບໄດ້ຖາມຂຶ້ນວ່າ "**ຊື່ງທ່ານອ່ານນັ້ນທ່ານເຂົ້າໃຈຫລື?**" ລາວມີໃຈຢາກຊ່ອຍຫລາຍ. ມີຫລາຍຄົນສາມາດອ່ານພຣະຄັມພີ ແຕ່ບໍ່ແມ່ນໝົດທຸກຄົນຈະສາມາດເຂົ້າໃຈ. ພຣະເຈົ້າຊົງປະທານໃຫ້ມີຄົນມາຊ່ອຍພວກເຮົາໃນດ້ານນີ້. ພວກເຮົາຈຶ່ງຄວນໃຫ້ພວກເຂົາຊ່ອຍພວກເຮົາ ແລະຕໍ່ໄປພວກເຮົາກໍຈະສາມາດຊ່ອຍຄົນອື່ນເພື່ອໃຫ້ເຂົ້າໃຈດ້ວຍ.

ກ່ອນຈະມີຄຣິສຕຽນ ມີຄວາມເຂົ້າໃຈວ່າພຣະເມຊີອາເປັນຜູ້ຮັບໃຊ້ທີ່ໄດ້ຮັບຄວາມທໍຣະມານຈະບໍ່ມີໃນຄວາມຄິດຂອງຊາວຢິວທີ່ມາເປັນຄຣິສຕຽນເລີຍ. ສະນັ້ນ ຊາວເອທີໂອເປັຽຄົນນີ້ຈຶ່ງຖາມຄວາມໝາຍຂອງຜູ້ຮັບໃຊ້ທີ່ໄດ້ຮັບຄວາມທໍຣະມານໃນພຣະທັມຕອນນີ້ວ່າ "**ຜູ້ປະກາດພຣະທັມໄດ້ກ່າວຢ່າງນີ້ເລົ່າເຖິງຜູ້ໃດ ເຖິງຕົນເອງຫລືເຖິງຜູ້ອື່ນ?**" ແນວຄິດທີ່ວ່າພຣະເມຊີອາຖືກ **ເຂົານຳທ່ານໄປເໝືອນນຳເອົາແກະໄປຂ້າ** ແທນພວກເຮົານັ້ນເຣື່ອງລາວຢ່າງນີ້ຈະມີຄວາມໝາຍຢ່າງໃດ? **ຟີລິບ** ສວຍໂອກາດທັນທີ **ຕັ້ງຕົ້ນເລົ່າແຕ່ພຣະທັມຕອນນັ້ນ ຈຶ່ງປະກາດຂ່າວປະເສີດເຣື່ອງພຣະເຢຊູໃຫ້ທ່ານຟັງ.**

ຟີລິບເຂົ້າໃຈດີແທ້ ພຣະເມຊີອາຈຳເປັນຈະຕ້ອງຮັບຄວາມທໍຣະມານຍ້ອນຄວາມບາບຂອງພວກເຮົາ. ພຣະເຈົ້າຊົງຊອບທັມ ແລະພຣະອົງບໍ່ສາມາດທີ່ຈະໃຫ້ຄວາມບາບຫລຸດລອດໄປໂດຍບໍ່ໄດ້ຖືກລົງໂທດ. ໃນຂນະດຽວກັນພຣະອົງຊົງຮັກພວກເຮົາ ແລະຕ້ອງການຢາກໃຫ້ພວກເຮົາມີຄວາມສັມພັນກັບພຣະອົງ. ໃນເມື່ອພວກເຮົາທຸກຄົນເປັນຄົນບາບ (ໂຣມ 3:23) ແລະພວກເຮົາສົມຄວນຈະຕ້ອງໄດ້ຮັບໂທດເຖິງແກ່ຄວາມຕາຍ (ໂຣມ 6:23) ພຣະອົງຊົງປະທານພຣະບຸດອົງດຽວຂອງພຣະອົງມາເປັນຄ່າໄຖ່ ຄືພຣະເຢຊູ ພຣະອົງຈະຕ້ອງໄດ້ຮັບຄວາມທໍຣະມານຈົນເຖິງແກ່ຄວາມຕາຍຈຶ່ງຈະລົບລ້າງຄວາມບາບຂອງພວກເຮົາໄດ້ ຊຶ່ງເປັນກຳແພງກີດກັ້ນລະຫວ່າງພວກເຮົາກັບພຣະເຈົ້າ. ຫລັງຈາກນັ້ນພຣະເຈົ້າຊົງໄດ້ບັນດານໃຫ້ພຣະເຢຊູຟື້ນຂຶ້ນມາຈາກຕາຍ ເພື່ອສະແດງໃຫ້ເຫັນຣິດທານຸພາບຂອງພຣະອົງ.

ເມື່ອພວກເຮົາວາງໃຈເຊື່ອໃນພຣະເຢຊູ ພວກເຮົາຈະໄດ້ຊີວິດອັນຄົບບໍຣິບູນ (ໂຢຮັນ 10:10). ພວກເຮົາສາມາດຄອງຄອຍບ້ານໃໝ່ໃນສວັນ ເມື່ອຈາກໂລກນີ້ໄປ (ໂຢຮັນ 16:1-4). ທີ່ກ່າວມານີ້ບໍ່ເປັນພຽງແຕ່ຂ່າວດີເທົ່ານັ້ນ ແຕ່**ເປັນຂ່າວປະເສີດ.** ຄວາມລອດພົ້ນເປັນຂອງພຣະຣາຊທານໃຫ້ແກ່ມະນຸດທຸກໆຊາດແລະພາສາ. ຜູ້ປະກາດພຣະທັມເອຊາຢາໄດ້ທຳນວາຍໄວ້ວ່າ ພຣະເຈົ້າຊົງຮັບຄົນຕ່າງຊາດແລະຄົນເທືອຍເຂົ້າໃນຄອບຄົວຂອງພຣະສັນຍາຂອງພຣະອົງ (ເອຊາຢາ 53:6-8). ຊາວເອທີໂອເປັຽຄົນນີ້ຊົງເປັນຕົວຢ່າງໃຫ້ເຫັນ. ລາວເປັນພາກສ່ວນຂອງການລິເລີ່ມຂອງການເກັບກ່ຽວໃນທະວີບອັຟຣິກາຈົນມາຮອດປະຈຸບັນນີ້.

ຟີລິບສາມາດເປັນພຍານໄດ້ຍ້ອນວ່າລາວໄດ້ສຶກສາພຣະຄັມພີ ແລະລາວມີຄວາມສັມພັນກັບພຣະເຢຊູ. ລາວເຫັນເຫດການແລະລາວສວຍໂອກາດບອກຊາວເອທີໂອເປັຽກ່ຽວກັບເຣື່ອງຂອງພຣະເຢຊູ.

♦ ໃນທາງໃດແດ່ ການເປັນພຍານຂອງຟີລິບຈຶ່ງເກີດຜົນໃນຊີວິດຂອງຄົນອື່ນ?
♦ ມີເຫດຜົນທີ່ໜັກແໜ້ນອັນໃດແດ່ທີ່ບໍ່ຢາກເປັນພຍານ?
♦ ທ່ານມີອຸປກອນປະເພດໃດທີ່ໃຊ້ໃນການເປັນພຍານ? ເປັນຫຍັງ?
♦ ທ່ານມີບາດກ້າວອັນໃດທີ່ຈະຈັດຕຽມທ່ານໃຫ້ເຂົ້າໃຈພຣະຄັມພີໃຫ້ຫລາຍຂຶ້ນ?
♦ ທ່ານມີບາດກ້າວອັນໃດທີ່ຈະອະທິບາຍພຣະຄັມພີໃຫ້ຄົນອື່ນ?
♦ ທ່ານຄິດວ່າຈະມີຫຍັງເກີດຂຶ້ນຖ້າຟີລິບບໍ່ສອຍໂອກາດເປັນພຍານໃຫ້ຊາວອີທີໂອເປັຽຄົນນັ້ນ? ມີຫຍັງແດ່ທີ່ພວກເຮົາສາມາດຮຽນຮູ້ເຫດການນີ້?

3. <u>ຊ່ອຍຜູ້ທີ່ເຊື່ອໃໝ່ໃຫ້ຮັບເອົາອົງພຣະເຢຊູ</u> (ກິຈການ 8:36-40)

ເມື່ອເດີນທາງໄປເຖິງບ່ອນມີນ້ຳຊາວອີທີໂອເປັຽຈຶ່ງຖາມຂຶ້ນວ່າ "**ເບິ່ງແມ ນ້ຳມີຢູ່ທີ່ນີ້ ມີອັນໃດຂັດຂ້ອງບໍ່ໃຫ້ຂ້າພະເຈົ້າຮັບບັບຕິສະມາ?**" ຄຳຕອບຂອງຟີລິບໃນຂໍ້ທີ 37 ມີເປີດອົງເລັບແລະປິດ ເນື່ອງຈາກວ່າຕົ້ນສະບັບເດີມບາງສະບັບບໍ່ມີຂໍ້ຄວາມນີ້. ເຖິງຢ່າງໃດກໍຕາມ ຂໍ້ນີ້ກ່ຽວຂ້ອງກັນກັບຂ່າວປະເສີດ. ເມື່ອໄວ້ວາງໃຈເຊື່ອໃນພຣະເຢຊູແລ້ວ ການຮັບບັບຕິສະມາກໍຕາມມາ. ຟີລິບຕອບວ່າ "**ຖ້າທ່ານເຕັ້ມໃຈເຊື່ອກໍຮັບໄດ້.**" ຊາວອີທີໂອເປັຽໄດ້ປະກາດວ່າ "**ເຮົາເຊື່ອວ່າພຣະເຢຊູຊຶ່ງເປັນພຣະບຸດຂອງພຣະເຈົ້າ.**"

ຟີລິບແລະຊາວອີທີໂອເປັຽ **ໄດ້ພ້ອມກັນລົງໄປໃນນ້ຳ** ແລະຟີລິບຈຶ່ງ **ບັບຕິສະມາ**ໃຫ້ລາວ. ຕໍ່ຈາກນັ້ນ **ທ່ານທັງສອງຂຶ້ນມາຈາກນ້ຳ**. ຊາວອີທີໂອເປັຽຄົນນັ້ນກໍເດີນທາງກັບເມືອບ້ານເມືອງຂອງລາວດ້ວຍຄວາມຊົມຊື່ນຍິນດີ.

ການຮັບບັບຕິສະາແມ່ນວິທີທາງນຶ່ງທີ່ບົ່ງບອກໃຫ້ຄົນອື່ນຮູ້ວ່າ ມີການປ່ຽນແປງໃນຊີວິດຂອງຄົນນັ້ນ. ການບັບຕິສະມາເປັນການຊີ້ບອກເຖິງຊີວິດ ການຝັງ ແລະການຟື້ນຄືນມາຈາກຕາຍຂອງອົງພຣະເຢຊູ. ໃນຂນະດຽວກັນກໍເປັນສັນຍາລັກຂອງຄວາມຕາຍຂອງຊີວິດເກົ່າ ແລະການຄືນມາມີຊີວິດໃໝ່ທີ່ຢູ່ໃຕ້ການຊົງນຳຂອງອົງພຣະເຢຊູ. ເປັນວິທີທາງອັນຈົບງາມຫລາຍທີ່ພວກເຮົາໄດ້ຮັບສາຣະພາບຕໍ່ໜ້າຝູງຊົນທັງຫລາຍວ່າ ພຣະເຢຊູຊົງໄດ້ກະທຳສິ່ງໃຫຍ່ຫລວງໃນຊີວິດຂອງພວກເຮົາ. ການຮັບບັບຕິສະມາເປັນການສະແດງເຖິງການເຊື່ອຟັງພຣະເຈົ້າຂອງພວກເຮົາ (ມັດທາຍ 28:19). ເມື່ອພວກເຮົາໃຫ້ພຣະເຢຊູເປັນພຣະເຈົ້າຂອງພວກເຮົາຢ່າງແທ້ຈິງ ພວກເຮົາກໍມີຄວາມປາຖນາທີ່ຈະປະຕິບັດຕໍ່ຄຳສັ່ງຂອງພຣະອົງ. ຄວາມເຊື່ອອັນບໍຣິສຸດຈະນຳໄປສູ່ການເປັນພຍານ ການເປັນພຍານຈະນຳສູ່ຄວາມລອດພົ້ນ ແລະການບັບຕິສະມາ. ຄົນຂອງພຣະເຈົ້າທີ່ມີຄວາມເຊື່ອສາມາດແລະຄວນມີບົດບາດໃນການບັບຕິສະມາຂອງຜູ້ທີ່ເຊື່ອ.

♦ ທ່ານຈະຊ່ອຍຜູ້ທີ່ເຊື່ອໃໝ່ໃຫ້ຮັບເອົາອົງພຣະເຢຊູໄດ້ຢ່າງໃດ?
♦ ໂບດທີ່ທ່ານໄປນັ້ນມີການສເລີມສລອງການບັບຕິສະມາແກ່ຜູ້ທີ່ເຊື່ອຢ່າງໃດ?
♦ ເປັນຫຍັງຊາວອີທີໂອເປັຽຈຶ່ງຢາກຮັບບັບຕິສະມາ?
♦ ພຣະສັນຍາໃໝ່ມີເງື່ອນໄຂອັນໃດແດ່ກັບການຮັບບັບຕິສະມາ? ມີການພົວພັນອັນໃດບໍ່ກັບບັບຕິສະມາເດັກນ້ອຍ?
♦ ການຮັບບັບຕິສະມາມີສັນຍາລັກອັນໃດ?
♦ ມີເຫດຜົນອັນໃດແດ່ທີ່ຈະຮັບບັບຕິສະມາ?
♦ ທ່ານມີບາດກ້າວອັນໃດທີ່ຈະເຮັດໃຫ້ການເປັນພຍານ ໃຫ້ເປັນພາກສ່ວນໃນຊີວິດປະຈຳວັນຂອງທ່ານ?